# ຕະຫຼາດຫຼັກຊັບ...

( ຕໍ່ຈາກໜ້າ 1 )

ຕະຫຼາດຫຼັກຊັບລາວ ຮ່ວມກັບ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູບເປີສ໌ ( ລາວ ) ຈຳກັດ ຫຼື ( PWC ) ໄດ້ຈັດງານສຳມະນາການກວດສອບບັນຊີໃຫ້ແກ່ຜູ້ປະກອບການ, ບໍລິສັດຕ່າງໆທີ່ເຫັນວ່າມີຄວາມພ້ອມໃນການກະກຽມເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ທັງເປັນການໃຫ້ຄວາມຮູ້ເພື່ອກຽມຕົວນຳໃຊ້ລະບົບບັນຊີສາກົນຮອງຮັບການເຊື່ອມໂຍງເຂົ້າສູ່ ເອອີຊີ ທີ່ຈະມາເຖິງນີ້. ດ້ານຜູ້ບໍລິຫານ PWC ຊີ້ ກິດຈະກຳດັ່ງກ່າວຈະຈັດຂຶ້ນເລື້ອຍໆ ເພື່ອເຮັດໃຫ້ບັນດາບໍລິສັດໃນລາວມີຄວາມເຂົ້າໃຈເລິກເຊິ່ງກ່ຽວກັບບັນຊີສາກົນ ຫວັງຢູ່ໃຫ້ບໍລິສັດມີມາດຕະຖານບັນຊີຫຼາຍຂຶ້ນ.

ທ່ານ ວັນຄຳ ວໍຣະວົງ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ກ່າວວ່າ: ການສຳມະນາໃນຄັ້ງນີ້ ແມ່ນມີຄວາມສຳຄັນຢ່າງຍິ່ງຕໍ່ນັກສຳມະນາກອນທັງຫຼາຍທີ່ຈະໄດ້ຮູ້ລະບົບບັນຊີສາກົນ, ການກວດສອບບັນຊີ, ການລາຍງານບັນຊີ ເຊິ່ງຈະນຳໃຊ້ລາຍງານປີ 2016. ດັ່ງທີ່ຮູ້ກັນດີແລ້ວວ່າທ້າຍປີນີ້ ສປປ ລາວ ເຮົາຈະກ້າວສູ່ປະຊາຄົມເສດຖະກິດອາຊຽນ ຍິ່ງມີຄວາມຈຳເປັນຫຼາຍຕໍ່ຫົວໜ່ວຍທຸລະກິດຕ້ອງໄດ້ປັບປຸງລະບົບບັນຊີຂອງຕົນໃຫ້ມີຄວາມໜ້າເຊື່ອຖື, ຖືກຕ້ອງ ແລະ ໂປ່ງໃສ ເພາະວຽກງານບັນຊີເປັນໝາກຫົວໃຈຫຼັກໃນການດຳເນີນທຸລະກິດ ອັນເຮັດໃຫ້ບໍລິສັດຂອງຕົນໄດ້ຮັບການຍອມຮັບຈາກພາກພື້ນ ແລະ ສາກົນ.

ທ່ານ ສົມຊາຍ ຈິນໂນວາດ ຮຸ້ນສ່ວນ ແລະ ຫົວໜ້າສາຍງານກວດສອບບັນຊີ ຂອງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູບເປີສ໌ ກ່າວວ່າ: ການຈັດສຳມະນາໃນຄັ້ງນີ້ເປັນນະໂຍບາຍຂອງບໍລິສັດເພື່ອການສະໜັບສະໜູນໃຫ້ທັງພາກລັດ ແລະ ເອກະຊົນ ມີການນຳໃຊ້ລະບົບບັນຊີຕາມມາດຕະຖານຂອງສາກົນ ໂດຍສະເພາະແມ່ນການລາຍງານທາງດ້ານການເງິນ, ການບັນຊີ ແລະ ການປ່ຽນແປງທີ່ມີຜົນປະໂຫຍດຕໍ່ບໍລິສັດ, ຕໍ່ອົງກອນ ແລະ ລູກຄ້າ ເພື່ອເຮັດໃຫ້ຜູ້ບໍລິຫານຂອງບໍລິສັດຮູ້ເຖິງຜົນກະທົບຂອງການປ່ຽນແປງຕ່າງໆທີ່ຈະເກີດຂຶ້ນໃນອະນາຄົດ ແລະ ພ້ອມກັນຫາວິທີການຮັບມືກັບລະບົບບັນຊີທີ່ມີຄວາມທັນສະໄໝໃນຍຸກຂອງການເຊື່ອມໂຍງ. ດັ່ງນັ້ນ, ຈຶ່ງເປັນເຫດຜົນທີ່ເຮັດໃຫ້ພວກເຮົານຳເອົາຄວາມຮູ້ກ່ຽວກັບການບັນຊີ, ການກວດສອບບັນຊີມາສະເໜີໃຫ້ກັບຜູ້ບໍລິຫານຂອງບໍລິສັດຕ່າງໆໄດ້ຮັບຊາບ ໂດຍສະເພາະບໍລິສັດທີ່ມີເງື່ອນໄຂຈະເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຕ້ອງໄດ້ຜ່ານການກວດສອບຈາກບໍລິສັດກວດສອບບັນຊີທີ່ມີຄວາມໜ້າເຊື່ອຖື ແລະ ເປັນມາດຕະຖານສາກົນກ່ອນຈຶ່ງສາມາດດຳເນີນການໄດ້.




ທ່ານກ່າວຕື່ມວ່າ: ນອກຈາກຈະໃຫ້ຄວາມຮູ້ດ້ານການກວດສອບບັນຊີ ແລະ ການບັນຊີໃຫ້ກັບພາກລັດ ຫຼື ເອກະຊົນແລ້ວ ພວກເຮົາຍັງຈະເອົາລະບົບບັນຊີດັ່ງກ່າວເຂົ້າໃນສະຖາບັນການສຶກສາຕ່າງໆ ເພື່ອໃຫ້ນັກສຶກສາໄດ້ຮັບຮູ້ ແລະ ນຳໃຊ້ລະບົບບັນຊີໃນລະດັບສາກົນຫຼາຍຂຶ້ນ ເພື່ອຄວາມຖືກຕ້ອງ, ໂປ່ງໃສສາມາດກວດສອບໄດ້. ເຊິ່ງປັດຈຸບັນບັນດາບໍລິສັດໃນລາວຜູ້ທີ່ນຳໃຊ້ລະບົບບັນຊີສາກົນຍັງມີໜ້ອຍ ແຕ່ເຊື່ອວ່າໃນອະນາຄົດໃກ້ໆນີ້ ເມື່ອມີການເຊື່ອມໂຍງດ້ານເສດຖະກິດລະບົບບັນຊີກໍ່ຈະເປັນມາດຕະຖານສາກົນຫຼາຍຂຶ້ນ ແລະ ເຮັດໃຫ້ບໍລິສັດທີ່ຈະຈົດທະບຽນໃນຕະຫຼາດຫຼັກຊັບມີເພີ່ມຂຶ້ນ.

ງານສຳມະນາດັ່ງກ່າວດຳເນີນໄປເປັນເວລາເຄິ່ງມື້ ປະກອບມີຫຼາຍຫົວຂໍ້ບັນລະຍາຍເປັນຕົ້ນແມ່ນ: ວິທີການກວດສອບຂອງຜູ້ກວດສອບບັນຊີ, ປະເພດການລາຍງານຂອງຜູ້ກວດສອບ ແລະ ການລາຍງານຂອງຜູ້ກວດສອບບັນຊີແບບໃໝ່ທີ່ຈະນຳໃຊ້ໃນປີ 2016. ກອງປະຊຸມດັ່ງກ່າວຈັດຂຶ້ນຕອນເຊົ້າວານນີ້ ທີ່ສຳນັກງານຕະຫຼາດຫຼັກຊັບລາວ ໂດຍເປັນກຽດເຂົ້າຮ່ວມຂອງ ທ່ານ ວັນຄຳ ວໍຣະວົງ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ, ທ່ານ ສົມຊາຍ ຈິນໂນວາດ ຮຸ້ນສ່ວນ ແລະ ຫົວໜ້າສາຍງານກວດສອບບັນຊີ ຂອງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູບເປີສ໌, ທ່ານ ອະພິສິດ ທ່ຽງຕຣົງພົນໂຍ ຜູ້ອຳນວຍການ PWC ( ລາວ ) ພ້ອມດ້ວຍຜູ້ບໍລິຫານຂອງຈາກບໍລິສັດຕ່າງໆ ແລະ ພະນັກງານເຂົ້າຮ່ວມຮັບຟັງ.

[ຂ່າວ: ສົມລິດ; ພາບ: ວິລະໄຊ]